# ຄູ່ມືນຳໃຊ້ປື້ມອ່ານເພີ່ມ

# ການພັດທະນາພາສາ ໃນເດັກໄວປະຖົມ




ໂດຍ ດາລາ ກັນລະຍາ

ດວງເດືອນ ບຸນຍາວົງ



ຈັດພິມໂດຍ ສະມາຄົມຮ່ວມນ້ຳໃຈກັບເດັກນ້ອຍລາວ (ALC)

ຄູ່ມືນຳໃຊ້ປຶ້ມອ່ານເພີ່ມ:

ເປັດນ້ອຍຂອງສົມປອງ
ໄກ່ນ້ອຍຕົກຂຸມ
ຂ້ອຍຈະໄປໃສນໍ
ນວນດອມ

# ການພັດທະນາພາສາ ໃນເດັກໄວປະຖົມ

*ໂດຍ ດາລາ ກັບລະຍາ*
*ດວງເດືອນ ບຸນຍາວົງ*



ຈັດພິມໂດຍ ສະມາຄົມຮ່ວມນ້ຳໃຈກັບເດັກນ້ອຍລາວ
ຕຸລາ 2007

# ຊື່ປຶ້ມ: ການພັດທະນາພາສາ
# ໃນເດັກໄວປະຖົມ

ຜູ້ຂຽນ: ດາລາ ກັບລະຍາ

ດວງເດືອນ ບຸນຍາວົງ

ບົດເລື່ອງປະກອບ:

ອຸທິນ ບຸນຍາວົງ

ໂອທອງ ຄໍາອິນຊູ

ໂມຣິ ໂທຣິ

ຮູບແຕ້ມ: ວົງສະຫວັນ ດໍາລົງສຸກ

ຊິກໂກ້ ມີລາກົງ

ຢາເບ ມິດຊືໂນຣິ

ຮູບຖ່າຍ: ນ້ຳໃຈທິບ ສູວັນນະວົງ, ແລະ ALC

ຈັດໜ້າໂດຍ: ດອກເກດຈັດພິມ ຈໍາກັດ ຜູ້ດຽວ

ຈັດພິມໂດຍ

ສະມາຄົມຮ່ວມນ້ຳໃຈກັບເດັກນ້ອຍລາວ (ALC)

ອຸປະຖໍາໂດຍ

**The Global Citizen Foundation**

ພິມຄັ້ງທີ 1 ຕຸລາ 2007

ທະບຽນອະນຸຍາດພິມເລກທີ: 143 ພຈ 25092007

ສະຫງວນລິຂະສິດ ໂດຍ ດາລາ ກັບລະຍາ, ດວງເດືອນ ບຸນຍາວົງ

ຈໍານວນພິມ: 5000 ຫົວ

ພິມທີ່ ໂຮງພິມ ປານຄໍາ

# ສາລະບັນ

ໜ້າ

ຄຳນຳ IV

ຄຳຊີ້ແຈງຂອງຜູ່ຂຽນ VI

1. ບົດນຳ: ຄວາມສຳຄັນຂອງການ ອ່ານ ຂຽນ ແລະສະແດງ
ອອກຂອງເດັກ ໃນໄວປະຖົມ 13

2. ການພັດທະນາຄຳສັບ 37

3. ການອະທິບາຍຄຳສັບ ສຳນວນ ການນຳໃຊ້ສ້າງປະໂຫຍກ 43

4. ກິດຈະກຳພັດທະນາພາສາ 47

5. ກິດຈະກຳສົ່ງເສີມການອ່ານ - ການຂຽນ
ເລື່ອງ "ເປັດນ້ອຍຂອງສົມປອງ" 52

6. ເລື່ອງ "ໄກ່ນ້ອຍຕົກຂຸມ" 65

7. ເລື່ອງ " ຂ້ອຍຈະໄປໃສນໍ" 71

8. ເລື່ອງ "ນວນດອມ" 93

# ຄຳນຳ

ສັງຄົມປະຈຸບັນ ເປັນສັງຄົມທີ່ຫຼາຍຄົນເອີ້ນວ່າ "ສັງຄົມຂໍ້ມູນຂ່າວສານ ແລະການສື່ສານ" ພາສາເປັນເຄື່ອງມືຮັບໃຊ້ທີ່ສຳຄັນທີ່ສຸດ ຄືຈະບໍ່ມີໃຜປະຕິເສດ ເພາະສະຖາບັນສອນພາສາຕ່າງປະເທດ (ອັງກິດ) ເກີດຂຶ້ນເຕັມເມືອງ ແຕ່ນັກຮຽນກໍຍັງເຕັມທຸກບ່ອນ ຂະນະດຽວກັນ ຄົນບ້ານເຮົາ ຕັ້ງແຕ່ເດັກນ້ອຍຈົນຮອດຊາວໜຸ່ມ ຜັດເວົ້າພາສາໂຕເອງບໍ່ຖືກ ອັນນີ້ຕິໃຜບໍ່ໄດ້ ຂອງວ່າພາກັນໂທດສື່ຕ່າງປະເທດໝົດ ສື່ມານຳຄື້ນ ຄື້ນມານຳອາກາດ ເຮົາຫາຍໃຈເອົາອາກາດ ຊັ້ນລະ. ແນວໃດກໍຕາມ ກ່ອນຈະໃຫ້ລູກຫຼານສື່ສານກັບຄົນອື່ນດ້ວຍພາສາອື່ນ ເຮົາຄວນໃຫ້ພວກເຂົາສື່ສານກັບຄົນລາວດ້ວຍພາສາລາວ ໃຫ້ຖືກຕ້ອງ ຈະແຈ້ງ.

ຄູ່ມືພັດທະນາພາສາເຫຼັ້ມນີ້ ຖືກຈັດພິມຂຶ້ນມາເພື່ອໃຫ້ເປັນເຄື່ອງມືໜຶ່ງ ໃນການສອນພາສາລາວຢູ່ຊັ້ນປະຖົມ. ດ້ວຍວ່າເດັກໃນໄວນີ້ມີການພັດທະນາທັງທາງຮ່າງກາຍ ແລະສະຕິປັນຍາໄວ ຖ້າໄດ້ຮັບການຊຸກຍູ້ທັງດ້ານການອ່ານ ການຂຽນ ແລະເຮັດກິດຈະກຳທີ່ກະຕຸ້ນທັກສະ ໃນການໃຊ້

ພາສາຂອງພວກເຂົາ ຢ່າງຖືກຕ້ອງແລ້ວ ຈະເຮັດໃຫ້ເດັກ ສາມາດ ນຳໃຊ້ພາສາລາວຢ່າງລ່ຽນໄຫຼ ຄືສາມາດ ຟັງ ອ່ານ ຂຽນ ແລະເຂົ້າໃຈຂໍ້ຄວາມ ທັງສາມາດວິເຄາະວິຈານ ສິ່ງທີ່ພວກເຂົາໄດ້ຍິນ ຫຼືໄດ້ອ່ານ.

ແລະສະມາຄົມຫວັງຢ່າງຍິ່ງວ່າ ປື້ມເຫຼັ້ມນີ້ ຈະສາມາດຊ່ອຍເຫຼືອຄູ ທັງໃນການສິດສອນ ແລະການນຳໃຊ້ປື້ມອ່ານເສີມຢ່າງເຕັມຄຸນຄ່າ.

ສະມາຄົມ ຮ່ວມນ້ຳໃຈກັບເດັກນ້ອຍລາວ (ALC)

# ຄຳຊີ້ແຈງຂອງຜູ້ຂຽນ

ເຖິງພໍ່ແມ່ ແລະຄູທີ່ຮັກແພງ,

ສະມາຄົມຮ່ວມນ້ຳໃຈເກັບເດັກນ້ອຍລາວ ໄດ້ຈັດແຈກຢາຍປື້ມອ່ານເສີມໃຫ້ໂຮງຮຽນປະຖົມ ໃນຫລາຍໆແຂວງ ຕາມຂອບເຂດຂອງໂຄງການສົ່ງເສີມການອ່ານການຮ່ວມມືລະຫວ່າງ ກົມສາມັນກະຊວງສຶກສາທິການແລະຫໍສະໝຸດແຫ່ງຊາດ ນັບແຕ່ປີ 1994 ມາຮອດ ປັດຈຸບັນ. ບັດນີ້ຫລາຍກວ່າ 2800 ໂຮງຮຽນ ໄດ້ຮູ້ຈັກກັບປື້ມອ່ານສຳລັບເດັກຫລາກຫລາຍຫົວຂໍ້ / ເລື່ອງຂອງພວກເຮົາ ແລະປື້ມທີ່ຂຽນ ແລະຈັດພິມໂດຍ ພາກສ່ວນອື່ນໆນຳອີກ ຢາກວ່າ ທຸກໆປະເພດປື້ມ ທີ່ເໝາະສົມສຳລັບທັງນັກຮຽນ ແລະຄູໃນຂັ້ນປະຖົມ ແລະມັດທະຍົມຕົ້ນກໍໄດ້ຢູ່ໃນມື ຂອງບັນດາທ່ານແລ້ວ. ແນ່ນອນ ປື້ມເກົ່າໆທີ່ຈັດພິມແຕ່ຄັ້ງ ປີ 1990 (ຕຳນານດາວປະຫລາດ ຈຳນວນ 20.000 ຫົວ) ແລະຊຸດປື້ມນ້ອຍສິບເຫລັ້ມ ພິມແບບງ່າຍດາຍ ຂາວດຳ ຈຳນວນ 100.000 ຫົວ (1992) ຕະຫລອດເຖິງ ຊຸດທີ່ຈັດທຳ ແລະຈັດພິມໂດຍ ຫໍສະໝຸດແຫ່ງຊາດ ຮ່ວມກັບວາລະສານ ວັນນະສິນ (10 ເລື່ອງ ພິມສີ ຈຳນວນ 50.000 ຫົວ ປີ 1993) ປື້ມເຫລົ່ານັ້ນ ອາດຈະລຶບຫາຍໄປ ຈາກຕູ້ປື້ມ ຂອງໂຮງ

ຮຽນແລ້ວ. ປຶ້ມໃໝ່ອີກກວ່າ 270 ຫົວເລື່ອງ ດ້ວຍຈຳນວນພິມເກືອບ 400.000 ຫົວ ກໍຄ່ອຍໆເຂົ້າມາແທນ.

ປຶ້ມທີ່ຈັດພິມໃນລະຍະຫລັງໆນີ້ ແຮ່ງປະກອບຮູບແຕ້ມສີ ພິມດ້ວຍເຈ້ຍມັນແຂງ ແລະທົນທານ ຄວນທີ່ຈະຢູ່ນຳເດັກນ້ອຍໄດ້ດົນເປັນສິບໆປີ.

ແຕ່ບັນຫາໃໝ່ທີ່ເກີດຂຶ້ນເວລານີ້ ກໍຄື ຄູມັກຈົ່ມວ່າ ເດັກນ້ອຍໄດ້ອ່ານປຶ້ມນັ້ນໝົດແລ້ວ ຈຶ່ງບໍ່ມີຄວາມສົນໃຈນຳປຶ້ມເກົ່າໆ ຫົວເລື່ອງເກົ່າໆອີກ ມີແຕ່ຢາກເຫັນປຶ້ມໃໝ່ເລື້ອຍໄປ, ອັນນີ້ ເປັນເລື່ອງທີ່ຈະຕ້ອງທຳຄວາມເຂົ້າໃຈກັນ.

ທຸກປີ ຜູ່ຂຽນໄດ້ລົງຢ້ຽມຢາມໂຮງຮຽນປະຖົມແລະມັດທະຍົມໃນຫລາຍແຂວງ ສ.ວ.ດ ຂັ້ນແຂວງ ແລະເມືອງທຸກແຫ່ງ ສັງເກດເຫັນວ່າ ສະຖິຕິການມາອ່ານປຶ້ມກັບທີ່ ແລະການຢືມປຶ້ມ ໄປອ່ານຢູ່ເຮືອນນັ້ນ ເປັນຕົວເລກທີ່ຫລຸດໂຕນກັນຢ່າງໜ້າຕົກໃຈ.

ເປັນຫຍັງເດັກນ້ອຍ ເຂົ້າມາຫ້ອງອ່ານ ຫລືມາຮັບບໍລິການ ການອ່ານຈາກຄູຈຶ່ງມີຈຳນວນຫລາຍ ແລະສະພາບປຶ້ມກໍເກົ່າໝອງ ຂາດຈີກ ຍ້ອນການຈັບບາຍຊ້ຳແລ້ວຊ້ຳອີກ ເຮັດໃຫ້ສະຖິຕິການເຂົ້າມາອ່ານກັບທີ່ ສູງຫລາຍແທ້. ?

ແຕ່ສະຖິຕິການຢືມປຶ້ມ ຢູ່ໃນບັດປະຈຳແຕ່ລະຫົວນັ້ນ

ມີໜ້ອຍດຽວ ? ນັ້ນສະແດງເຖິງວ່າ ການນຳໃຊ້ປຶ້ມ ຍັງຢູ່ໃນລະດັບຕ່ຳສຸດ ຄືໃຊ້ໜ້ອຍ, ໜ້ອຍໂດຍນັກຮຽນ ແລະ ໜ້ອຍໂດຍ ຄູ/ພໍ່ແມ່. ຄືໃຊ້ເວລາກັບປຶ້ມໜ້ອຍ ດ້ວຍການຈັດໃຫ້ອ່ານກັບທີ່ເທົ່ານັ້ນ ບໍ່ທັນໄດ້ໃຫ້ຄວາມສຳຄັນ ແກ່ການຢືມປຶ້ມໄປອ່ານຢູ່ເຮືອນ.

ຜູ່ຂຽນສັງເກດເຫັນດ້ວຍຕາຕົວເອງວ່າເດັກເຂົ້າມາຫ້ອງອ່ານ ຫລືມາຮັບບໍລິການ ນັ້ນ ມີເວລາແຕ່ພຽງ 15 ນາທີ ເຂົາເຈົ້າຈຶ່ງທັນແຕ່ ຢິບປຶ້ມຫົວນຶ່ງມາ (ອາດບໍ່ມີເວລາຮອດຊິເລືອກຊ້ຳ ສຳລັບຜູ່ຢາກອ່ານ) ແລ້ວກໍປີດໆ ຢ່າງເຮັ່ງຮີບ ທັນໄດ້ເບິ່ງຮູບທີ່ສື່ເຖິງເລື່ອງ ຫລື ນິທານແດ່ ແລ້ວກໍອາດທັນໄດ້ອ່ານແຕ່ບາງແຖວ. ສຳລັບຜູ່ອ່ານເກັ່ງ ອາດທັນອ່ານສຸດເລື່ອງ ສັ້ນໆຊະນິດ 12-20 ໜ້າ (ໂຕໜັງສືໃຫຍ່ ປຶ້ມສຳລັບເດັກອາຍຸ 5-8 ປີ), ສ່ວນປຶ້ມທີ່ມີເນື້ອໃນຍາວ ພິມຕົວນ້ອຍລົງ ຊຶ່ງກໍເໝາະກັບເດັກທີ່ອ່ານລ່ຽນແລ້ວ ຄື ປ.3, ປ.4 ,ປ. 5 ນັ້ນ ຖ້າບໍ່ຢືມ ເມືອອ່ານເຮືອນ ກໍຢ່າຫວັງເລີຍວ່າ ເດັກຈະໄດ້ອ່ານ ເອົາເນື້ອຫາສາລະແທ້ໆຂອງປຶ້ມ.

ເລື່ອງນີ້ ເມື່ອສອບຖາມກັບຄູ ຜູ້ຮັບຜິດຊອບປຶ້ມ ເພິ່ນກໍຕອບເປັນສຽງດຽວກັນວ່າ ບໍ່ມີເວລາຫລາຍ ເພື່ອບໍລິການໃຫ້ທົ່ວເຖິງ ແລະ/ຫລື ເດັກເບີດໜ່າຍປຶ້ມເກົ່າໆ ຢາກອ່ານປຶ້ມໃໝ່ໆ.

24/VII ຫໍສະໝຸດ

ຕາມທຳມະດາແລ້ວ ຜົນສຳເລັດອັນແທ້ຈິງ ຂອງວຽກງານສົ່ງເສີມການອ່ານນັ້ນ ຄວນມີດັດຊະນີຊີ້ບອກ ຢູ່ບ່ອນ:

ຈຳນວນປຶ້ມ ແລະຜູ່ຢືມປຶ້ມ ເປັນຫລັກ ແລະຮອງລົງມາກໍແມ່ນ ພັດທະນາການ ໃນ ການໃຊ້ພາສາ (ລາວ) ຂອງເດັກ ວ່າ:

- ຮູ້ອ່ານ ຄືອ່ານເປັນ ອ່ານແລ້ວເຂົ້າໃຈ ຈື່ເລື່ອງ ສາມາດສົນທະນາເລື່ອງນັ້ນໆໄດ້

- ຂຽນເກັ່ງ ແລະຫັດແຕ່ງເກັ່ງ ໆລໆ.

ຖ້າວ່າ ເດັກໃນປະຖົມປາຍ ແລະ ມ.ຕົ້ນ ຍັງຂຽນໜັງສືຜິດໆ ຖືກໆ ແຕ່ງເລື່ອງໄດ້ແຕ່ ແບບເກົ່າ ຊ້ຳຊາກ ສັ້ນ (4-5 ແຖວ) ຂຽນຈົດໝາຍກໍບໍ່ເປັນ ກໍໝາຍຄວາມວ່າ ພາສາລາວ ຍັງອ່ອນ (ລະດັບອັກຂະລະວິທີ) ເຂົາເຈົ້າຍັງບໍ່ພ້ອມທີ່ຈະຂຶ້ນຮຽນຫລັກສູດພາສາລາວ ໃນຂັ້ນ ມ.ປາຍໄດ້ ເພາະເວລານັ້ນ ຫລັກສູດພາສາລາວ ຈະຢູ່ໃນລະດັບ ວະຈີວິພາກ ແລະວາກະຍະສຳພັນແລ້ວ.

ດັ່ງນັ້ນ ເຮົາພ້ອມກັນມາເບິ່ງຄືນວ່າ ການອ່ານທີ່ແທ້ຈິງ ຄວນຈະເປັນແນວໃດ ? ຈຶ່ງແມ່ນການ ອ່ານທີ່ສົມບູນແບບ ?

ຜູ່ຂຽນພິຈາລະນາເບິ່ງຫລັກສູດ ແລະວິທີການ

ສອນພາສາແມ່ໃນປະເທດອື່ນໆ ຢູ່ຂັ້ນປະຖົມ ເພິ່ນຈະເນັ້ນໃຫ້ເດັກ ສາມາດໃຊ້ຄໍາສັບເປັນຢ່າງລ່ຽນໄຫລ ໄດ້ຄໍາຫລາກຫລາຍ ສ້າງປະໂຫຍກໄດ້ ເລົ່າເລື່ອງໄດ້ດີ ໂດຍສະເພາະເພິ່ນຈະເນັ້ນ ເລົ່າປາກເປົ່າຫລາຍ. ເດັກນ້ອຍເພິ່ນຈຶ່ງເກັ່ງປາກ ເກັ່ງເວົ້າ ເກັ່ງເລົ່າເລື່ອງ ເກັ່ງອະທິບາຍສິ່ງທີ່ເຂົາຮູ້ໃຫ້ຜູ້ອື່ນຟັງ ມີຄວາມສາມາດສູງໃນການສື່ອັນທີ່ເຂົາຮູ້ເຫັນໃຫ້ຜູ້ອື່ນ. ຜູ່ຂຽນເຫັນວ່າ ນັ້ນແມ່ນຍ້ອນການພັດທະນາພາສາໃຫ້ເດັກໄວປະຖົມຂອງເຂົາເຮັດໄດ້ດີ.

ພາສາລາວ ກໍມີຄວາມຈໍາເປັນ ແລະຮຽກຮ້ອງໃຫ້ໄດ້ຮັບການພັດທະນາ ເລີ່ມແຕ່ຢູ່ໃນໄວປະຖົມ ເຊັ່ນ ດຽວກັນ ເພື່ອໃຫ້ເດັກຮູ້ຄໍາສັບຫລາກຫລາຍ ຮູ້ໃຊ້ຄໍາ ຮູ້ເວົ້າຮູ້ຂຽນ ຮູ້ອະທິບາຍ. ໃຫ້ພາສາລາວແຂງ ແຕ່ຕອນຮຽນສຸດປະຖົມພີ້ໄປ ເມື່ອຂຶ້ນມັດທະຍົມ ກໍຈະນໍາຫລັກສູດທັນຢ່າງງ່າຍດາຍຂຶ້ນ.

ການພັດທະນາພາສາຂອງເດັກນັ້ນ ຕ້ອງພັດທະນາກັນມາແຕ່ນ້ອຍໆ ແຕ່ຕອນແອບປາກ ຈົນຮອດອະນຸບານແລ້ວກໍມາເລັ່ງທະວີຂຶ້ນ ຕອນທີ່ເດັກຮຽນອ່ານຮຽນຂຽນແລະປະສົມຕົວໜັງສືໃສ່ສະຫລະໄດ້ ເປັນຂັ້ນຕອນທີ່ສໍາຄັນ.

ຄວາມແມ່ນແລ້ວ ການອ່ານນັ້ນ ເປັນປະສົບການທີ່ມະຫັດສະຈັນສໍາລັບເດັກ, ເຂົາ ເຄີຍເອີ້ນ ແມ່ມາດົນແລ້ວ

ແຕ່ຕອນອາຍຸ 9-10 ເດືອນ ກໍເວົ້າ "ແມ່ " ໄດ້ ແຕ່ມາຮອດອ່ານ ຄຳວ່າ "ແມ່" ໄດ້ເອງນີ້ ແມ່ນເຂົາໄດ້ຄົ້ນພົບສິ່ງແປກໃໝ່ ໄດ້ເຫັນວ່າ "ແມ່" ຂຽນແນວນີ້ ແ× ມ. ໄມ້ເອກ ແມ່. ເຂົາອ່ານໄດ້ ແລ້ວດີໃຈ ມີຄວາມສຸກ. ແມ່ເປັນຜູ່ຢູ່ໃກ້ຊິດມີນົມໃຫ້ດູດ ຫາເຂົ້າໃຫ້ກິນ ເອົາສິ້ງເສື້ອມາໃສ່ໃຫ້ອົບອຸ່ນ ແລະອື່ນໆອີກເປັນສິບໆຮ້ອຍໆ ສາລະພັດ ແຕ່ແມ່ຈະເຮັດໃຫ້ເຂົາມີຄວາມສຸກ ມີຄວາມດີໃຈ.

ສະນັ້ນ ການອ່ານຄຳວ່າ ແມ່ ໄດ້ ແມ່ນເລື່ອງ ວິເສດສຸດ ! ຕໍ່ຈາກນັ້ນ ກໍມີຄຳອື່ນໆ ຕິດຕາມມາ ເຊັ່ນ: ປາ ປູ ກາ ໄກ່ ໝາ...

ແນ່ນອນ ຄຳວ່າ ພໍ່ ແລະຄຳເອີ້ນສະມາຊິກອື່ນໆໃນຄອບຄົວ ກໍແມ່ນສຳຄັນຄືກັນໝົດ, ທຸກຄັ້ງທີ່ ເດັກອ່ານໄດ້ຄຳໃໝ່ ແມ່ນເຂົາຕື່ນເຕັ້ນ ພໍໃຈ ແລະສົນໃຈ ຢາກອ່ານຕື່ມ, ຕື່ນໃຈໄດ້ຮູ້ນິທານ ໄດ້ຮູ້ການເດີນທາງ ເຫັນຫລາຍບ່ອນຮູ້ການລະຫລິ້ນຂອງຄົນອື່ນໆ ວິທະຍາສາດ ສິ່ງແວດລ້ອມຂ່າວຄາວຂອງໂລກ ຄວາມກ້າວໜ້າ ການຄົ້ນພົບສິ່ງໃໝ່ໆໄດ້ຮູ້ໝົດ ຮູ້ຫລາຍຂຶ້ນໆ.

ການອ່ານຫລາຍ ແມ່ນຮູ້ຫລາຍ ຮູ້ຫລາຍກໍພັດທະນາຫລາຍ ແລະພັດທະນາຢ່າງຮອບດ້ານ ບັນດາຄູເຮົາກໍໄດ້ມີປະສົບການມາແລ້ວ ກັບນັກຮຽນຂອງຕົນວ່າ ເດັກທີ່ອ່ານ

ຫລາຍນັ້ນ ຈະກາຍເປັນນັກຮຽນເກັ່ງ ສະນັ້ນ ການສົ່ງເສີມໃຫ້ເດັກອ່ານ ຈຶ່ງແມ່ນເສັ້ນທາງທີ່ສຳຄັນ ເປັນປະໂຫຍດ ເປັນ "ບາກິນ" ຂອງ ຄູ/ພໍ່ແມ່ ດັ່ງຄຳຂວັນຊວນອ່ານທີ່ວ່າ:

*ອ່ານແລ້ວ ເຊົາໂງ່*

ປື້ມຫົວນີ້ ຮຽບຮຽງຂຽນຂຶ້ນມາ ຈາກການຄົ້ນຄວ້າ ແລະປະສົບການໂຕຈິງ ຫລັງຈາກການທົດລອງ ທົດສອບວິທີການຕ່າງໆ ທີ່ຈະກ່າວເຖິງ ກັບຫລາຍຄົນມາແລ້ວ ບໍ່ວ່າຜູ້ອາຍຸ 9 ເດືອນ ຂວບເຄິ່ງ ສາມຂວບ ຈົນຮອດໄວປະຖົມ ແລະມັດທະຍົມ. ຈຶ່ງຫວັງວ່າ ຄູ/ພໍ່ແມ່ ຈະອົດທົນພະຍາຍາມທຳຄວາມເຂົ້າໃຈ ແລະນຳໃຊ້ຄຳແນະນຳ ໃນຄູ່ມືຫົວນີ້ ກັບເດັກນ້ອຍຂອງທ່ານ. ໃນນີ້ອາດເຫັນວ່າ ນຳເອົາເລື່ອງອ່ານເພີ່ມ ພຽງແຕ່ 4 ເລື່ອງ ມາເປັນຕົວຢ່າງ ແຕ່ເມື່ອຄູນຳໃຊ້ແລ້ວ ເຫັນວ່າເປັນຜົນ ກໍຂໍໃຫ້ຄິດຄົ້ນນຳໃຊ້ປື້ມອື່ນໆ ໄດ້ເຊັ່ນດຽວກັນ.

ດ້ວຍຄວາມປາຖະໜາດີ

*ດາລາ ກັນລະຍາ*

# 1. ບົດນຳ
## ຄວາມສຳຄັນຂອງການ ອ່ານ ຂຽນ ແລະສະແດງອອກ ຂອງເດັກໃນໄວປະຖົມ

*" ການອ່ານ ແມ່ນການສະແຫວງຫາເພື່ອເຂົ້າໃຈ ສິ່ງທີ່ເຮົາອ່ານ... ການອ່ານ ເປັນເລື່ອງຍາກ ຕ້ອງອາໄສ ປັດໄຈຫລາຍຢ່າງ ແຕ່ມັນໃຫ້ຜົນກຸ້ມຄ່າ ເພາະໄດ້ຮັບ ຄວາມອີ່ມໃຈໄປນຳ... ດັ່ງນັ້ນ ໃນບັນດາຄວາມຈຳເປັນ ພື້ນຖານທັງຫລາຍ ການສອນໃຫ້ອ່ານ ແລະ ຂຽນ ຢ່າງຖືກຕ້ອງ ຈຶ່ງມີຄວາມສຳຄັນຫລາຍ ເພາະທັງໝົດນັ້ນ ມັນບໍ່ແມ່ນແຕ່ການສອນອ່ານ ເທົ່ານັ້ນ ແຕ່ເປັນການສອນ ປະສົບການ ການສ້າງ ຄວາມເຂົ້າໃຈຢ່າງສ້າງສັນ... ການເຝິກຝົນ ຢ່າງມີວິຈາລະນະຍານນັ້ນ ຕ້ອງອາໄສ ການອ່ານ ແລະ ອັນທີ່ຈຳເປັນທ່ຽກັນ ກໍຄືການຂຽນ "*

ເປົາໂລ ແຟຣຣ໌, (ນັກວິຊາການສຶກສາສາດ ຜູ້ມີຊື່ສຽງ ຂອງໂລກ ກ່າວໄວ້ ຕອນໜຶ່ງໃນປື້ມ "ຄູ ໃນຖານະນັກ ວັດທະນະທຳ, ISBN974-93142-1-2, ສຳນັກພິມ ສວນເງິນມີມາ, ປະເທດໄທ, 2003).

## 1. ຄວາມຫມາຍສຳຄັນຂອງ ການຂຽນ ການແຕ້ມ ການສະແດງສິລະປະ (ດົນຕີ ຂັບ ລຳ ຮ້ອງເພງ ຟ້ອນ...)

ການອ່ານ ແມ່ນເພື່ອໃຫ້ເຂົ້າໃຈສັນຍະລັກ ສ່ວນການຂຽນ ການແຕ້ມ ຫລື ການສະແດງອອກທາງດ້ານ ສິລະປະຕ່າງໆຂອງເດັກນ້ອຍ ໃນທາງປື້ນກັບ ແມ່ນເພື່ອໃຫ້ຄົນອື່ນ (ຜູ້ອ່ານ ຜູ້ເບິ່ງ ເຂົ້າໃຈເຂົາ) ເຂົ້າໃຈໃນສິ່ງທີ່ສື່ອອກໄປ (ຈິດວິນຍານ) ຄວາມຕ້ອງການ ຄວາມມັກ ນິໄສໃຈຄໍຂອງພວກເຂົາ ຍິ່ງໄປກວ່ານີ້ ການສະແດງອອກດ້ານການຂຽນ ແລະສິລະປະອື່ນໆ ຍັງມີພະລັງໃນດ້ານຈິດໃຈສູງ ເຮັດໃຫ້ຄົນເຮົາເກີດມີຄວາມຫນັກແຫນ້ນ ເຊື່ອຫມັ້ນໃນຕົນເອງ ໃນທາງການແພດ ຈຶ່ງມີການນຳໃຊ້ສິລະປະ ເພື່ອປິ່ນປົວຄົນມີບັນຫາທາງຈິດໃຈ. ໃນດ້ານຄຸນຄ່າຄວາມສຳຄັນ ຂອງການຂຽນ ກໍຄືຜົນງານການຂຽນ ຄົງບໍ່ມີຫຍັງເປັນທີ່ສົງໄສ ເພາະການໃຫ້ຣາງວັນວັນນະກຳຍອດຍ້ຽມລະດັບໂລກ ຫລື ຊາດ ຫລື ທ້ອງຖິ່ນ ທີ່ມີຢ່າງຫລວງຫລາຍນັ້ນ ຢັ້ງຢືນຈະແຈ້ງ ເຖິງຄວາມສຳຄັນຂອງການຂຽນສ້າງສັນແລ້ວ. ຜ່ານມາໃນປະຫວັດສາດ ໂລກໄດ້ຮັບຮູ້ວ່າບົດຂຽນ ບົດປະພັນ ມີພະລັງເທົ່າໃດ ໃນການສ້າງຄວາມສາມັກຄີ ຫັນປ່ຽນຄວາມຄິດຂອງຄົນ ເຮັດໃຫ້ຜູ້ຄົນມາກມາຍ ເຂົ້າ

ໃຈບັນຫາການກິດຂີ່ ຄວາມຈໍາເປັນທີ່ຈະຕ້ອງປ່ຽນແປງສັງຄົມ ແນວຄິດປະຕິວັດ ໂຄ່ນລົ້ມລະບອບສັກດີນາ ທີ່ຂູດຮີດ ກໍເກີດຈາກບົດຂຽນຂອງ ນັກຄິດນັກປະພັນຜູ້ຍິ່ງໃຫຍ່ຝຣັ່ງຄື ທ່ານ ໂວນແຕຣ໌ (Voltere) ແລະຊັງຊາກ ຣຸດໂຊ (Jean Jacque Rousseau) ຕົ້ນສະຕະວັດທີ 18, ຂະນະທີ່ຢູ່ອາເມລິກາ ບົດປະພັນເລື່ອງ ຕູບນ້ອຍລຸງທອມ (Uncle Tom's Cabin) ຂອງນາງ ຮາຣິແອດ ບີກເຊີຣ ສະໂຕຟ Harriet Beecher Stow) ກໍມີສ່ວນຊຸກຍູ້ໃຫ້ລັດຖະບານ ອອກກົດຫມາຍເລີກທາດຜິວດໍາຢູ່ ສະຫະລັດອາເມລິກາ ເມື່ອປີ ຄ. ສ. 1800 ປາຍ. ທ່ານເລຟ ໂຕນສະຕອຍ ນັກປະພັນຜູ້ຍິ່ງໃຫຍ່ ຂອງຣັດເຊຍ ກໍໄດ້ຂຽນເຜີຍແບ ຄວາມໂຫດຮ້າຍຂອງສົງຄາມສະໄຫມພະເຈົ້າຊາ (ຄ.ສ. 1900 ປາຍ), ເຮັດໃຫ້ເກີດຂະບວນການຕໍ່ຕ້ານ, ການບໍ່ໃຊ້ຄວາມຮຸນແຮງເປັນແຮງຈູງໃຈໃຫ້ ທ່ານ ຄານທີ ໃນເລື່ອງຫລັກການອະ ຫິງສາ (non violence).

ໃນປັດຈຸບັນ ກໍມີນັກປະພັນ ນັກປາດຫລາຍທ່ານ ກໍາລັງຂຽນອະທິບາຍຊີ້ສະແດງຜົນຮ້າຍອັນຕະລາຍຂອງລັດທິບໍລິໂພກນິຍົມ ບໍລິສັດຜູກຂາດຂ້າມຊາດ ການອຸດສາຫະກໍາ ທີ່ທໍາລາຍສິ່ງແວດລ້ອມອອກມາ ທັງໃນຮູບແບບບົດປະພັນວັນນະຄະດີ ບົດສາລະຄະດີຮູບເງົາ ທັງໄດ້ເກີດມີຂະ

ບວນການກຣິນພິຊ ພັກຂຽວ ແລະການພັດທະນາ ແບບ ອະນຸຮັກທຳມະຊາດ ຫລື ການຟື້ນກະແສພັດທະນາຕາມ ແບບ. ອີກສິ່ງຫນຶ່ງທີ່ຊ່ອຍໃຫ້ພວກເຮົາ ຮັບຮູ້ຄຸນຄ່າ ຂອງ ການປະພັນ/ການຂຽນ ໃນລະດັບໂລກ ກໍຄືງແມ່ນຣາງ ວັນທີ່ຕັ້ງໄວ້ ໂດຍ ນັກວິທະຍາສາດ ສະວີເດັນ ທ່ານ ອານເຟຣດ ໂນແບລ (Alfred Nobel) ທີ່ຄົ້ນພົບສູດ ດິນລະເບີດ (dynamite) ໄດ້ມອບມໍລະດົກມະຫາສານໄວ້ ໃຫ້ແກ່ຄົນຣຸ່ນ ຕໍ່ມາ ເພື່ອສົ່ງເສີມການຄົ້ນຄິດປະດິດແຕ່ງ ທີ່ຈະຊ່ອຍມະ ນຸດຊາດດຳລົງຄົງສຸກຢູ່ໄດ້ຢ່າງຍືນຍົງ ໃນນັ້ນ ມີຣາງວັນ ສຳລັບ ບົດວັນນະຄະດີນຳ ຫລື ທີ່ເອີ້ນກັນວ່າ ວັນນະກຳ ສ້າງສັນໂນແບລ ໄປຣຊ໌ (Nobel Prize Literature) ມີຄ່າເທົ່າ ກັບ ຣາງວັນສາຂາອື່ນໆ (ປະມານ ຫນຶ່ງລ້ານໂດລາ) ແລະ ໃນຫລາຍໆປະເທດ ນັກຂຽນ/ບົດປະພັນ ກໍໄດ້ຊື່ວ່າ ແມ່ນ ຊັບພະຍາກອນອັນສູງຄ່າຂອງຊາດ.

ດັ່ງນັ້ນ ການສົ່ງເສີມການຂຽນ ເຮັດໃຫ້ເດັກນ້ອຍມັກ ຂຽນ ຢາກຂຽນ ຢາກແຕ່ງ ປະດິດສ້າງ ສິ່ງສວຍງາມ ເປັນປະໂຫຍດ ຕໍ່ສ່ວນຮວມ ຈຶ່ງແມ່ນຫນ້າທີ່ຫນຶ່ງ ຂອງ ພວກເຮົາຢ່າງຫລີກບໍ່ໄດ້ ໃນນັ້ນ ການສົ່ງເສີມໃຫ້ຢາກຂຽນ ເປັນພື້ນຖານທີ່ສຸດ ຖ້າບໍ່ມີຄວາມຄິດຢາກຂຽນ ປະພັນ

ໜັງສືແລ້ວ ເກືອບຢາກວ່າ ຈະບໍ່ສາ ມາດມີຄວາມຄິດປະດິດ ສ້າງຢ່າງອື່ນເລີຍ.ແຕ່ຈະເຮັດແບບໃດແດ່ນັ້ນ ຈະໄດ້ສຶກສາ ຄົ້ນຄວ້ານຳກັນ ຕາມເງື່ອນໄຂ ແລະຄວາມເປັນໄປໄດ້. ຫລາຍຄົນອາດຄິດງໍ້ຫງຽງວ່າ ເຮົາເອງບໍ່ແມ່ນນັກຂຽນ ນັກແຕ່ງ ຈະໄປສົ່ງເສີມໃຫ້ເດັກນ້ອຍ ມັກອ່ານ ມັກຂຽນ ມັນສະແດງໄດ້ແນວໃດ ? ອັນນີ້ ເຮົາຮູ້ເຫັນກັນມາແລ້ວ ຄູສອນແຕ່ງເລື່ອງທີ່ດີ ອາດບໍ່ແມ່ນນັກຂຽນກໍໄດ້ ຄືກັນກັບ ຄູສອນແຕ້ມສິລະປະ ກໍບໍ່ໄດ້ເປັນສິລະປິນທີ່ເກັ່ງ ພໍພຽງແຕ່ ຮູ້ວິທີສົ່ງເສີມເດັກນ້ອຍ ໃຫ້ໄດ້ປົດປ່ອຍພອນສະຫວັນຄວາມ ສາມາດຂອງເຂົາອອກມາ ພວກເຮົາກໍເຊັ່ນກັນ ຕ້ອງເປັນ ຜູ້ມີໃຈ ຢາກຊຸກຍູ້ເຂົາ ເຂົ້າໃຈເຂົາ ໃຫ້ໂອກາດ ໂດຍຫມູນໃຊ້ ເຕັກນິກຕ່າງໆ ເຊິ່ງນັກວິຊາການ ຜູ້ມີປະສົບການໄດ້ສະສົມ ໄວ້ແລ້ວ.

ການຂຽນ ແມ່ນການສະແດງອອກຂອງຄວາມນຶກ ຄິດອັນສ້າງສັນ ມັນຮຽກຮ້ອງ ໃຫ້ມີການຄົ້ນຄິດຢ່າງເປັນ ຂະບວນ ຕ້ອງທົບທວນຮື່ນຕອງ ຜູ້ທີ່ເປັນນັກປາດອາຈານ ທັງຫລາຍໃນໂລກ ຈຶ່ງເປັນທັງນັກຂຽນ/ນັກເວົ້າ ເຜີຍແຜ່ ທາງປາກເປົ່າ. ສະໄຫມບູຮານ ພະພຸດທະອົງ ເປັນນັກປະຕິ ບັດຕົວຈິງ ທີ່ບັນລຸຜົນ ແລ້ວນຳເອົາຄວາມຈິງຕ່າງໆ ມາ ເຜີຍແຜ່ຕໍ່ ດ້ວຍວິທີການ ເທດສະຫນາປາກເປົ່າ ພະອົງ

ຈຶ່ງເປັນນັກປາຖະກະຖາ ນັກຄຶດນັກແຕ່ງ. ແນ່ນອນວ່າ ຜູ້ຄົນເຫລົ່ານີ້ຕ້ອງມີຄວາມຮູ້ ຫລາກຫລາຍ ຮູ້ຢ່າງຮອບດ້ານເລິກເຊິ່ງ ທັງເປັນຜູ້ມັກຮຽນຮູ້ ຢູ່ຕະຫລອດເວລາ ແລະການຮຽນຮູ້ຂອງພວກເພິ່ນ ກໍແມ່ນມາຈາກການອ່ານ ແລກປ່ຽນ ຮັບຟັງນາໆທັດສະນະ ເສຽສະຫລະເວລາໃສ່ຢ່າງຈິງຈັງນັ້ນເອງ.

## 2. ບົດບາດຂອງ ພໍ່ແມ່ ແລະ ຄູ

ພວກເຮົາເວົ້າເຖິງການອ່ານ ການຂຽນ ແຕ່ໃນຕົວຈິງ ມັນຫມາຍເຖິງການອ່ານ ແລະການຟັງ (ເພື່ອຮັບຊາບເຂົ້າໃຈລະຫັດ ສັນຍະລັກ ຂໍ້ຄວາມຜ່ານສຽງ), ການຂຽນ/ການເວົ້າ (ເພື່ອໃຫ້ຜູ້ອື່ນເຂົ້າໃຈ ເວົ້າໄດ້ດີ ເວົ້າຈະແຈ້ງ), ການແຕ້ມການສະແດງອອກທາງສິລະປະອື່ນໆ ເຫລົ່ານີ້ລ້ວນແຕ່ແມ່ນປັດໄຈ ເສີມສ້າງຄວາມຫມັ້ນຄົງດ້ານຈິດໃຈໃຫ້ແກ່ເດັກໄດ້ ເພາະເດັກນ້ອຍ ຮູ້ສຶກວ່າເຂົາສື່ສານໄດ້ດີຄົນອື່ນເຂົ້າໃຈເຂົາ ແລະເຂົາກໍເຂົ້າໃຈຄົນອື່ນຫລາຍຂຶ້ນເຮົາຈະເຫັນວ່າ ເມື່ອເດັກນ້ອຍຮ້ອງລຳ ຟ້ອນໄດ້ ຜູ້ເປັນພໍ່ແມ່ ກໍຈະຊື່ນຊົມພໍໃຈກັບທຸກຄົນ ເຊັ່ນດຽວກັນ ເມື່ອລູກອ່ານໄດ້ ເວົ້າໄດ້ດີ ຂຽນໄດ້ ແຕ້ມໄດ້ ພໍ່ແມ່ ຄູສອນ ທຸກຄົນ

ຕ່າງກໍເບິ່ງເຂົາ ດ້ວຍສາຍຕາຊື່ນຊົມສະເຫມີ ເດັກນ້ອຍຮູ້ສຶກດີ ມີກຳລັງໃຈໃນການສະທ້ອນແບບນີ້. ຈຶ່ງຢາກຈະເຮັດເລື້ອຍໆ ການເຮັດເລື້ອຍໆ ກໍກາຍເປັນນິໄສຄວາມມັກຄວາມຢາກໄປເລີຍ.

ເມື່ອເດັກນ້ອຍຮັບຮູ້ວ່າ ທັງການອ່ານ ແລະການຂຽນການແຕ້ມ ການສະແດງອອກຂອງເຂົາ ເປັນເຄື່ອງມືທີ່ມີອິດທິພົນໃນການສື່ສານ ພວກເຂົາກໍຈະມັກອ່ານ ຢາກອ່ານເອງ ຢາກແຕ້ມ ແລະຢາກສະແດງອອກທຸກຢ່າງດ້ວຍຄວາມເຊື່ອຫມັ້ນຕົນເອງ.

ດັ່ງນັ້ນວຽກຂອງ ຄູ/ນັກເຄື່ອນໄຫວ ຈຶ່ງບໍ່ແມ່ນການສອນໃຫ້ເດັກອ່ານອອກ ຂຽນໄດ້ເທົ່ານັ້ນ ແຕ່ແມ່ນເຮັດໃຫ້ເຂົາ ຢາກອ່ານ ຢາກຂຽນ ຢາກສະແດງ ສິລະປະ ແລະໄດ້ຮັບໂອກາດນັ້ນຕາມສົມຄວນ ບໍ່ຖືກກີດກັນ. ຫນ້າທີ່ ຂອງພໍ່ແມ່ ແລະສັງຄົມ ກັບຄູ/ນັກເຄື່ອນໄຫວກິດຈະກຳ: ໃຫ້ກຳລັງໃຈ ສົ່ງເສີມ ສະແດງຄວາມສົນໃຈ ໃຫ້ໂອກາດ ນີ້ເກືອບຢາກວ່າ ແມ່ນສູດສຳເລັດ ຂອງການຊຸກຈູງ ໃຫ້ເດັກປະສົບຄວາມສຳເລັດ ແລະມີຄວາມສຸກ.

ຄວາມຈິງ ຄອບຄົວໃນບ້ານເຮົາ ຍັງມີໂອກາດ ແລະ

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ